## ວັນອາທິດທີ 1 ພະຈິກ
## ສົມໂພດນັກບຸນທັງຫລາຍ



**ພຣະວໍລະສານໂດຍນັກບຸນມັດເທວ 5, 1-12**

ພວກເຮົາຈົ່ງຊື່ນຊົມຍິນດີເຖີດ, ດ້ວຍວ່າພວກເຈົ້າໄດ້ຮັບບຳເໜັດອັນຍິ່ງໃຫຍ່ໃນສະຫວັນ. ເມື່ອພຣະເຢຊູເຈົ້າທອດພຣະເນດເຫັນຝູງຊົນ, ພຣະອົງກໍ່ສະເດັດຂຶ້ນພູ ຊົງປະທັບນັ່ງ, ແລະພວກສາວົກກໍ່ເຂົ້າມາໃກ້ພຣະອົງ, ພຣະອົງຈຶ່ງຕັ້ງຕົ້ນເທດສອນພວກເຂົາດັ່ງນີ້:

ບຸນລາບແກ່ຜູ້ມີໃຈຍາກຈົນ, ດ້ວຍວ່າອານາຈັກສະຫວັນເປັນຂອງຂອງເຂົາ

ບຸນລາບແກ່ຜູ້ມີໃຈອ່ອນຫວານ, ດ້ວຍວ່າພວກເຂົາຈະໄດ້ຮັບແຜ່ນດິນມາເປັນມໍລະດົກ

ບຸນລາບແກ່ຜູ້ທີ່ໄດ້ຮັບຄວາມທຸກຮ້ອນ, ດ້ວຍວ່າພວກເຂົາຈະໄດ້ຮັບຄວາມທຸເລົາບັນເທົາ

ບຸນລາບແກ່ຜູ້ຫອດຫິວຄວາມຍຸຕິທຳ, ດ້ວຍວ່າພວກເຂົາຈະໄດ້ອີ່ມໜຳສຳລານ

ບຸນລາບແກ່ຜູ້ມີໃຈເອັນດູກາຣຸນາ,

ດ້ວຍວ່າພວກເຂົາຈະໄດ້ຮັບຄວາມເອັນດູກາຣຸນາຕອບແທນ

ບຸນລາບແກ່ຜູ້ມີໃຈບໍລິສຸດ, ດ້ວຍວ່າພວກເຂົາຈະໄດ້ເຫັນພຣະເປັນເຈົ້າ

ບຸນລາບແກ່ຜູ້ສ້າງສັນຕິພາບ, ດ້ວຍວ່າພວກເຂົາຈະໄດ້ຊື່ວ່າເປັນບຸດພຣະເປັນເຈົ້າ

ບຸນລາບແກ່ຜູ້ຖືກບັງບຽດຍ້ອນຄວາມຍຸຕິທຳ,

ດ້ວຍວ່າອານາຈັກສະຫວັນເປັນຂອງຂອງເຂົາ.

ບຸນລາບແກ່ພວກເຈົ້າທັງຫລາຍ, ເມື່ອພວກເຈົ້າຖືກດ່າປ້ອຍ, ຖືກບັງບຽດແລະໃສ່ຄວາມຫລາຍຢ່າງຍ້ອນເຮົາ, ພວກເຈົ້າຈົ່ງຊື່ນຊົມຍິນດີເຖີດ, ດ້ວຍວ່າພວກເຈົ້າຈະໄດ້ຮັບບຳເໜັດອັນຍິ່ງໃຫຍ່ໃນສະຫວັນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 5, 1-12**

ວັນທີໜຶ່ງພະຈິກຂອງທຸກໆປີ ພຣະກຣິສຕະຈັກສະຫລອງນັກບຸນທັງຫລາຍຢູ່ສະຫວັນ. ນັກບຸນທັງຫລາຍນີ້ກໍເປັນເໝືອນພວກເຮົາແຕ່ລະຄົນ. ພວກທ່ານທັງຫລາຍກໍໄດ້ຜ່ານຊີວິດຢູ່ໃນໂລກນີ້, ມີຄວາມອ່ອນແອເໝືອນກັບພວກເຮົາ. ເມື່ອຕາຍໄປແລ້ວ, ທ່ານທັງຫລາຍກໍໄດ້ຜ່ານການຊໍາລະລ້າງໃຫ້ບໍລິສຸດ, ກ່ອນທີ່ຈະບັນລຸເຖິງອໍລະທັນ, ເປັນນັກບຸນ. ວັນນີ້, ຈຶ່ງເປັນວັນແຫ່ງຄວາມຊື່ນຍິນດີສໍາລັບພວກເຮົາ. ຍ້ອນພວກເຮົາໄດ້ເຫັນຈຸດໝາຍປາຍທາງທີ່ພວກເຮົາຈະກ້າວເດີນໄປອັນແມ່ນຈະໄດ້ໄປຢູ່ຮ່ວມສຸກກັບບັນດາ ນັກບຸນທັງຫລາຍໃນສະຫວັນ. ເພື່ອຈະໄດ້ໄປຢູ່ກັບບັນດານັກບຸນທັງຫລາຍນັ້ນພວກເຮົາຕ້ອງທໍາຢ່າງໃດ? ຄໍາຕອບຂອງຄໍາຖາມນີ້ຢູ່ໃນວາຈາພຣະເຈົ້າວັນນີ້ອັນແມ່ນ: ບຸນມະຫາລາບແປດປະການ ຫລືຄວາມສຸກແປດປະການນັ້ນເອງ. ຄວາມສຸກແປດຢ່າງນີ້ປຽບເໝືອນເສັ້ນທາງທີ່ພຣະເຈົ້າສອນພວກເຮົາໃຫ້ກ້າວເດີນໄປຕາມແຕ່ຄວາມສາມາດຂອງແຕ່ລະຄົນ. ຢ່າງເຊັ່ນ: ນັກບຸນຟັງຊິສໂກແຫ່ງເມືອງອັດຊີຊີຫລືແມ່ເທເຣຊາແຫ່ງເມືອງການກຸດຕາ,ພວກທ່ານເປັນຜູ້ມີໃຈຍາກຈົນແລະຮັກຄົນທຸກຈົນຕະຫລອດຊີວິດຂອງພວກທ່ານ. ດ້ວຍເຫດນີ້, ເມື່ອພວກທ່ານຈາກໂລກນີ້ໄປ, ພວກທ່ານກໍໄດ້ຮັບອານາຈັກສະຫວັນມາເປັນມໍລະດົກ. ຈາກນັ້ນ, ພວກເຮົາກໍມີແບບຢ່າງຊີວິດຂອງນັກບຸນແວັງຊັງເດີໂປນ. ທ່ານເປັນຜູ້ມີຄວາມເມດຕາກະລຸນາຕໍ່ຄົນອື່ນເປັນຕົ້ນຕໍ່ຄົນທີ່ຖືກປະຖິ້ມ. ເມື່ອທ່ານຈາກໂລກນີ້ໄປ, ທ່ານກໍໄດ້ຮັບຄວາມເມດຕາກະລຸນາຈາກພຣະເຈົ້າຕອບແທນ. ແລະພວກເຮົາກໍມີແບບຢ່າງຊີວິດຂອງບັນດາມໍລະນາສັກຂີທີ່ຖືກບັງບຽດ, ໃສ່ຄວາມ, ດ່າປ້ອຍຍ້ອນພຣະນາມຂອງພຣະເຢຊູເຈົ້າ. ເມື່ອຈາກໂລກນີ້ໄປ, ພວກເຂົາກໍໄດ້ຮັບບໍາເໜັດອັນຍິ່ງໃຫຍ່ໃນອານາຈັກສະຫວັນ.

ແບບຢ່າງທີ່ກ່າວມາຂ້າງເທິງນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈວ່າພວກເຮົາທຸຫຄົນລ້ວນແຕ່ຖືກຮຽກເອີ້ນໃຫ້ເປັນຜູ້ສັກສິດ, ເປັນນັກບຸນ. ແລະບຸນມະຫາລາບທີ່ພຣະເຢຊູເຈົ້າສອນພວກເຮົາວັນນີ້ເປັນເສັ້ນທາງແຫ່ງຄວາມສຸກທີ່ນໍາພວກເຮົາໄປຫາພຣະອົງຜູ້ເປັນບໍ່ເກີດແລະຈຸດໝາຍປາຍທາງຂອງພວກເຮົາ.

**ພາວະນາ**

ໂອພຣະເຈົ້າ, ໃນວັນທີ່ພຣະກຣິສຕະຈັກສະຫລອງນັກບຸນທັງຫລາຍຢູ່ສະຫວັນ ໂຜດໃຫ້ລູກສໍານຶກໄດ້ວ່າກະແສຮຽກທໍາອິດທີ່ລູກໄດ້ຮັບໃນວັນຮັບສິນລ້າງບາບນັ້ນແມ່ນການເປັນຜູ້ສັກສິດ, ເປັນນັກບຸນ. ໂຜດໃຫ້ລູກບັນລຸເຖິງເປົ້າໝາຍນີ້ໂດຍການນໍາເອົາວາຈາຂອງພຣະອົງມາປະຕິບັດໃນຊີວິດຂອງລູກໃຫ້ເກີດຜົນດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ